**Skills on court enforcement**
**ທັກສະການຈັດຕັ້ງປະຕິບັດຄຳຕັດສິນຂອງສານ**

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 5
## Skills in the use of measures related to the implementation of court judgments
## ທັກສະໃນການນຳໃຊ້ມາດຕະການກ່ຽວກັບການປະຕິບັດຄຳຕັດສິນຂອງສານ

### 1. ຈຸດປະສົງໃນການນຳໃຊ້ມາດຕະການກ່ຽວກັບການປະຕິບັດຄຳຕັດສິນຂອງສານ

ການນຳໃຊ້ມາດຕະການໃນການປະຕິບັດຄຳຕັດສິນຂອງສານ ກໍເພື່ອເຮັດໃຫ້ການປະຕິບັດຄຳຕັດສິນຂອງສານສຳເລັດຜົນ, ສະນັ້ນ ອົງການປະຕິບັດຄຳຕັດສິນຂອງສານຈະອອກມາດຕະການຕ່າງໆໄດ້ໃນກໍລະນີທີ່ເຫັນວ່າມີເງື່ອນໄຂທາງດ້ານກົດໝາຍ ແລະ ລະບຽບການສະເພາະ.

ກ່ອນອື່ນໝົດ ພະນັກງານປະຕິບັດຄຳຕັດສິນຂອງສານຕ້ອງອອກໝາຍຮຽກ ເພື່ອຮຽກຜູ້ຖືກປະຕິບັດຄຳຕັດສິນຂອງສານ ເຂົ້າມາພົບພະນັກງານປະຕິບັດຄຳຕັດສິນຂອງສານ ແລະ ຮຽກຜູ້ທີ່ໄດ້ຮັບຜົນປະໂຫຍດຈາກຄຳຕັດສິນຂອງສານ ຈຸດປະສົງເພື່ອແຈ້ງຕໍ່ຜູ້ກ່ຽວໃຫ້ຊາບກ່ຽວກັບຄຳຕັດສິນຂອງສານ ແລະ ສຶກສາອົບຮົມໃຫ້ຜູ້ກ່ຽວປະຕິບັດຕາມຄຳຕັດສິນຂອງສານ, ຖ້າຜູ້ກ່ຽວບໍ່ຍອມປະຕິບັດຕາມຄຳຕັດສິນຂອງສານ, ອົງການປະຕິບັດຄຳຕັດສິນຂອງສານ ຈຶ່ງຈຳເປັນຕ້ອງນຳໃຊ້ມາດຕະການໃນການປະຕິບັດຄຳຕັດສິນຂອງສານ.

### 2. ມາດຕະການພາຕົວ

ໃນກໍລະນີ ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫາກໄດ້ຮັບໝາຍຮຽກເຖິງສາມຄັ້ງແລ້ວ ແຕ່ບໍ່ເຂົ້າມາຕາມໝາຍຮຽກ ໂດຍບໍ່ມີເຫດຜົນພຽງພໍ ຫຼື ໄດ້ຮັບແຈ້ງການໃຫ້ຢູ່ເຮືອນ ຫຼື ສະຖານທີ່ໃດໜຶ່ງ ເພື່ອເຂົ້າຮ່ວມການປະຕິບັດຄຳຕັດສິນ, ແຕ່ຜູ້ກ່ຽວບໍ່ປະຕິບັດໂດຍບໍ່ມີເຫດຜົນພຽງພໍນັ້ນ ອົງການປະຕິບັດຄຳຕັດສິນຂອງສານ ຈະອອກຄຳສັ່ງໃຫ້ພາຕົວຜູ້ກ່ຽວ ເຂົ້າມາຮັບຊາບ ຫຼື ເຂົ້າມາສະຖານໃດໜຶ່ງ ເພື່ອປະຕິບັດຄຳຕັດສິນຂອງສານ ແຕ່ບໍ່ໃຫ້ກັກຕົວ ຫຼື ກັກຂັງ ເພື່ອເລັ່ງໜີ້.

"ການພາຕົວ ໃຫ້ປະຕິບັດໄດ້ແຕ່ເວລາ ຫົກໂມງ ຫາ ສິບແປດໂມງ, ເວັ້ນເສຍແຕ່ ໃນກໍລະນີ ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຈະເອົາຕົວຫຼົບໜີ ຫຼື ບໍ່ຮູ້ບ່ອນຢູ່ທີ່ແນ່ນອນ"[1].

ການພາຕົວນນີ້ອົງການປະຕິບັດຄຳຕັດສິນຂອງສານຈະຕ້ອງໄດ້ມີການວາງແຜນການຢ່າງລະອຽດ ແລະ ເປັນເຈົ້າການ ປະສານສົມທົບກັບເຈົ້າໜ້າທີ່ຕຳຫຼວດ ເພື່ອພາຕົວຜູ້ຖືກປະຕິບັດຄຳຕັດສິນຂອງສານ ຕາມຄຳສັ່ງພາຕົວ. ກ່ອນການພາຕົວ ເຈົ້າໜ້າທີ່ຕ້ອງອ່ານຄຳສັ່ງ ໃຫ້ຜູ້ຖືກພາຕົວ ຊາບ.

### 3. ມາດຕະການຍຶດ ຫຼື ອາຍັດຊັບ

- **ມາດຕະການຍຶດຊັບ:**

ມາດຕະການຍຶດຊັບ ແມ່ນການອອກຄຳສັ່ງເປັນລາຍລັກອັກສອນຂອງຫົວໜ້າອົງການປະຕິບັດຄຳຕັດສິນຂອງສານ ເພື່ອຍຶດຊັບຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ທີ່ມີເຈດຕະນາບໍ່ປະຕິບັດຕາມຄຳຕັດສິນຂອງສານ ຫຼື ຊັບດັ່ງກ່າວເປັນຫຼັກຊັບຄ້ຳປະກັນໃນການກູ້ຢືມ ຫຼື ເຈົ້າຂອງຊັບໄດ້ມອບໃຫ້ເພື່ອນຳມາປະຕິບັດຄຳຕັດສິນຂອງສານ ແລະ ໃນກໍລະນີທີ່ສານຍັງບໍ່ອອກຄຳສັ່ງດັ່ງກ່າວໃນຂັ້ນຕອນການດຳເນີນຄະດີ.

---

[1] ມາດຕາ 54 ກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ, ສະບັບເລກທີ 12/ສພຊ, ລົງວັນທີ 17 ພະຈິກ 2021

“ການຍຶດຊັບໝາຍເຖິງການເອົາຊັບທີ່ຖືກຍຶດນັ້ນມາຮັກສາໄວ້ຢູ່ອົງການປະຕິບັດຄຳຕັດສິນຂອງສານ ຫຼື ຮັກສາໄວ້ສະຖານທີ່ປອດໄພ ແລະ ເໝາະສົມ ເພື່ອຈະນຳມາປະຕິບັດໃນຂັ້ນຕອນຕໍ່ໄປ ແລະ ເຈົ້າຂອງຊັບບໍ່ສາມາດນຳໃຊ້ຊັບທີ່ຍຶດມານັ້ນໄດ້. ດັ່ງນັ້ນ, ການອອກຄຳສັ່ງຍຶດຊັບ ແມ່ນໃຊ້ສະເພາະກັບສັງຫາຣິມະຊັບ (ຊັບເຄື່ອນທີ່) ເທົ່ານັ້ນ”[2].

ຜ່ານການກວດກາ ແລະ ຂຶ້ນບັນຊີຊັບສິນຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ຊຶ່ງໄດ້ຮູ້ແຈ້ງກ່ຽວກັບປະເພດ, ຈຳນວນ, ສະຖານທີ່ເກັບມ້ຽນວັດຖຸສິ່ງຂອງ, ສິນຄ້າ ຫຼື ປະເພດສັງຫາລິມະຊັບ ທີ່ເປັນປະໂຫຍດໃຫ້ແກ່ການປະຕິບັດຄຳຕັດສິນຂອງສານ, ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງຍຶດຊັບດັ່ງກ່າວ ມາຮັກສາໄວ້ໃນສະຖານທີ່ເໝາະສົມ.

“ພະນັກງານປະຕິບັດຄຳຕັດສິນຂອງສານ ປະສານສົມທົບກັບເຈົ້າໜ້າທີ່ຕຳຫຼວດທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດການຍຶດຊັບ ພາຍໃນເວລາ ເຈັດວັນ ລັດຖະການ ນັບແຕ່ວັນອອກຄຳສັ່ງຍຶດຊັບ ເປັນຕົ້ນໄປ”[3].

ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງເຮັດບົດບັນທຶກລະອຽດກ່ຽວກັບຊັບທີ່ໄດ້ຍຶດທຸກຄັ້ງ.

- **ມາດຕະການອາຍັດຊັບ:**

ມາດຕະການອາຍັດຊັບ ແມ່ນການອອກຄຳສັ່ງເປັນລາຍລັກອັກສອນຂອງຫົວໜ້າອົງການປະຕິບັດຄຳຕັດສິນຂອງສານ ເພື່ອອາຍັດຊັບຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ທີ່ມີເຈດຕະນາບໍ່ປະຕິບັດຕາມຄຳຕັດສິນຂອງສານ ຫຼື ຊັບດັ່ງກ່າວເປັນຫຼັກຊັບຄ້ຳປະກັນໃນການກູ້ຢືມ ຫຼື ມີການມອບຊັບຈາກຜູ້ເປັນເຈົ້າຂອງ ເພື່ອໃຫ້ນຳມາໃຊ້ແທນໜີ້ສິນ ແລະ ໃນກໍລະນີທີ່ສານຍັງບໍ່ອອກຄຳສັ່ງດັ່ງກ່າວໃນຂັ້ນຕອນການດຳເນີນຄະດີ.

ການອາຍັດຊັບໝາຍເຖິງການຫ້າມຜູ້ເປັນເຈົ້າຂອງຊັບ ແລະ ບຸກຄົນອື່ນບໍ່ໃຫ້ໂອນກຳມະສິດ, ບໍ່ໃຫ້ເຊົ່າ, ບໍ່ໃຫ້ຕໍ່ເຕີມຊັບ, ບໍ່ໃຫ້ແລກປ່ຽນ, ບໍ່ໃຫ້ຈຳນຳ, ບໍ່ໃຫ້ຈຳນອງ, ບໍ່ໃຫ້ທຳລາຍ ແລະ ບໍ່ໃຫ້ປ່ຽນແປງລັກສະນະຂອງຊັບບໍ່ວ່າໃນຮູບແບບໃດກໍຕາມ ໂດຍເປົ້າໝາຍໃນການອາຍັດກໍເພື່ອຈະນຳຊັບດັ່ງກ່າວມາປະຕິບັດຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ ແລະ ກົດໝາຍ, ແຕ່ເຈົ້າຂອງຊັບສາມາດນຳໃຊ້ຊັບທີ່ອາຍັດນັ້ນໄດ້ເປັນຕົ້ນແມ່ນ ທີ່ດິນ, ເຮືອນ, ລົດ.

“ຊັບ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ທີ່ກວດພົບນັ້ນ ໃນກໍລະນີ ເປັນບັນຊີເງິນຝາກ, ອະສັງຫາລິມະຊັບ ຊຶ່ງມີຂໍ້ມູນຈະແຈ້ງແລ້ວ, ທີ່ເປັນປະໂຫຍດໃຫ້ແກ່ການປະຕິບັດຄຳຕັດສິນຂອງສານ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງອາຍັດຊັບດັ່ງກ່າວໄວ້ ພາຍໃນເວລາ ຫ້າວັນ ລັດຖະການ ແລ້ວແຈ້ງໃຫ້ຄູ່ຄວາມ, ອົງການປົກຄອງບ້ານ ແລະ ພາກສ່ວນທີ່ກ່ຽວຂ້ອງຊາບ”[4].

ໃນເວລາລົງແຈ້ງຄຳສັ່ງອາຍັດຊັບກັບທີ່ນັ້ນ ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງເຮັດບົດບັນທຶກໄວ້ເພື່ອເປັນຫຼັກຖານ.

- **ຊັບທີ່ບໍ່ອະນຸຍາດໃຫ້ ຍຶດ ຫຼື ອາຍັດ ມາໃຊ້ແທນໜີ້ສິນ:**

1) ສິ່ງສັກກາລະບູຊາ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ທີ່ມີມູນຄ່າບໍ່ເກີນ ໜຶ່ງລ້ານກີບຕໍ່ຫົວໜ່ວຍ;
2) ອາຫານສຳລັບກິນປະຈຳວັນ ແລະ ຢາປົວພະຍາດຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ;

---

[2] ຕຳລາກໍ່ສ້າງວິຊາຊີບປະຕິບັດຄຳຕັດສິນຂອງສານ ( ເຫຼັ້ມທີ II: ພາກທັກສະສະເພາະ ) ຂອງສະຖາບັນຍຸຕິທຳແຫ່ງຊາດ, ປີ 2020, ໜ້າທີ 36
[3] ມາດຕາ 55 ກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ, ສະບັບເລກທີ 12/ສພຊ, ລົງວັນທີ 17 ພະຈິກ 2021
[4] ມາດຕາ 56 ກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ, ສະບັບເລກທີ 12/ສພຊ, ລົງວັນທີ 17 ພະຈິກ 2021

3) ວັດຖຸສິ່ງຂອງ ທີ່ໃຊ້ເປັນປະຈຳຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ແລະ ຂອງບຸກຄົນ ຊຶ່ງຢູ່ພາຍໃຕ້ການເບິ່ງແຍງລ້ຽງດູຂອງຜູ້ກ່ຽວ ເຊັ່ນ ເຄື່ອງນຸ່ງຫົ່ມ, ເຄື່ອງນອນ, ເຄື່ອງຄົວກິນ ແລະ ເຄື່ອງຫຼິ້ນເດັກນ້ອຍ ທີ່ມີມູນຄ່າບໍ່ເກີນຫ້າລ້ານກີບ ຕໍ່ຄົນ;

4) ວັດຖຸສິ່ງຂອງທີ່ຈຳເປັນ ສຳລັບການປະກອບອາຊີບ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ທີ່ມີມູນຄ່າບໍ່ເກີນຫ້າລ້ານກີບ.

**4. ມາດຕະການຫັກເງິນໃນບັນຊີ, ລາຍຮັບ, ລາຍໄດ້ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ**

**• ມາດຕະການຫັກເງິນໃນບັນຊີ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ:**

ໃນກໍລະນີ ມີຄຳສັ່ງອາຍັດບັນຊີເງິນຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ແຕ່ຜູ້ກ່ຽວຍັງບໍ່ປະຕິບັດ ຫຼື ປະຕິບັດບໍ່ຄົບຖ້ວນ, ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງຫັກເງິນໃນບັນຊີດັ່ງກ່າວ ໃນຈຳນວນຍັງຄ້າງປະຕິບັດເພື່ອປະຕິບັດຄຳຕັດສິນຂອງສານ.

"ອົງການຈັດຕັ້ງ ທີ່ຄຸ້ມຄອງບັນຊີເງິນທີ່ກ່ຽວຂ້ອງ ຕ້ອງຫັກ ແລະ ໂອນເງິນ ຕາມຈຳນວນທີ່ກຳນົດໄວ້ໃນຄຳສັ່ງດັ່ງກ່າວ ເຂົ້າບັນຊີຂອງອົງການປະຕິບັດຄຳຕັດສິນຂອງສານ ຫຼື ບັນຊີຂອງເຈົ້າໜີ້ ຕາມຄຳສັ່ງນັ້ນ ພາຍໃນເວລາ ເຈັດວັນລັດຖະການ ນັບແຕ່ວັນໄດ້ຮັບຄຳສັ່ງ ເປັນຕົ້ນໄປ"[5].

**• ມາດຕະການຫັກລາຍຮັບ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ:**

ໃນກໍລະນີ ຜູ້ຖືກປະຕິບັດຄຳຕັດສິນຂອງສານ ບໍ່ມີຊັບທີ່ຈະນຳມາປະຕິບັດ ແຕ່ຜູ້ກ່ຽວມີລາຍຮັບ ເປັນຕົ້ນເງິນເດືອນ, ຄ່າແຮງງານ, ເງິນອຸດໜູນ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງຫັກເອົາລາຍຮັບດັ່ງກ່າວເພື່ອປະຕິບັດຄຳຕັດສິນຂອງສານ.

ການຫັກລາຍຮັບ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ສູງສຸດບໍ່ໃຫ້ເກີນ ສາມສິບ ສ່ວນຮ້ອຍ ຂອງລາຍຮັບທັງໝົດໃນແຕ່ລະເດືອນ, ຍົກເວັ້ນຄູ່ຄວາມໄດ້ຕົກລົງກັນ ຫຼື ຕາມຄຳຕັດສິນຂອງສານ.

ສຳລັບ ຜູ້ຖືກປະຕິບັດຄຳຕັດສິນຂອງສານ ທີ່ມີລາຍໄດ້ບໍ່ປົກກະຕິ ໃຫ້ຫັກໂດຍອີງໃສ່ລາຍໄດ້ຕົວຈິງ ແຕ່ຕ້ອງຮັບປະກັນເງື່ອນໄຂການດຳລົງຊີວິດຂອງຜູ້ກ່ຽວ ແລະ ບຸກຄົນທີ່ຢູ່ໃນຄວາມຮັບຜິດຊອບລ້ຽງດູຂອງຜູ້ກ່ຽວ.

ການຈັດຕັ້ງ, ນິຕິບຸກຄົນ ຫຼື ບຸກຄົນ ບ່ອນທີ່ຜູ້ຖືກປະຕິບັດຄຳຕັດສິນຂອງສານ ມີລາຍຮັບຕ້ອງປະຕິບັດຕາມຄຳສັ່ງດັ່ງກ່າວ ແລະ ມອບເງິນທີ່ຫັກນັ້ນ ໃຫ້ອົງການປະຕິບັດຄຳຕັດສິນຂອງສານທີ່ກ່ຽວຂ້ອງ.

**• ມາດຕະການຫັກລາຍໄດ້ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ:**

ໃນກໍລະນີ ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫາກມີລາຍໄດ້ຈາກການດຳເນີນທຸລະກິດ ຫຼື ຈາກແຫຼ່ງລາຍໄດ້ອື່ນ ແຕ່ບໍ່ຍອມປະຕິບັດຄຳຕັດສິນຂອງສານ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ອອກ ຄຳສັ່ງຫັກລາຍໄດ້ດັ່ງກ່າວສູງສຸດບໍ່ໃຫ້ເກີນ ຫົກສິບສ່ວນຮ້ອຍ ຂອງລາຍໄດ້ສຸດທິ.

ການຈັດຕັ້ງ, ນິຕິບຸກຄົນ ຫຼື ບຸກຄົນ ທີ່ມີພັນທະມອບລາຍໄດ້ໃຫ້ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຕ້ອງປະຕິບັດຕາມຄຳສັ່ງດັ່ງກ່າວ ແລະ ມອບ ຫຼື ໂອນເງິນນັ້ນ ໃຫ້ອົງການປະຕິບັດຄຳຕັດສິນຂອງສານທີ່ກ່ຽວຂ້ອງ.

**5. ມາດຕະການຕໍ່ບຸກຄົນອື່ນທີ່ໄດ້ຮັກສາເງິນ ຫຼື ມີໜີ້ຕ້ອງສົ່ງ ໃຫ້ຜູ້ຖືກປະຕິບັດຄຳຕັດສິນຂອງສານ**

ໃນກໍລະນີ ມີຫຼັກຖານຢ່າງຈະແຈ້ງຢັ້ງຢືນວ່າບຸກຄົນອື່ນ ໄດ້ຮັກສາເງິນ ຫຼື ມີໜີ້ຕ້ອງສົ່ງ ໃຫ້ຜູ້ຖືກປະຕິບັດຄຳຕັດສິນຂອງສານ, ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງໃຫ້ບຸກຄົນດັ່ງກ່າວມອບເງິນ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ.

---

[5] ມາດຕາ 58 ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ສະບັບເລກທີ 04/ສພຊ ລົງວັນທີ 25 ກໍລະກົດ 2008

ຜູ້ຮັກສາເງິນ ຫຼື ມີໜີ້ຕ້ອງສົ່ງ ຕ້ອງມອບເງິນ ໃຫ້ອົງການປະຕິບັດຄໍາຕັດສິນຂອງສານ ຕາມຈໍານວນ ແລະ ກໍານົດເວລາທີ່ໄດ້ກໍານົດໄວ້ໃນຄໍາສັ່ງດັ່ງກ່າວ.

ກ່ອນການມອບເງິນໃຫ້ເຈົ້າໜີ້, ອົງການປະຕິບັດຄໍາຕັດສິນຂອງສານ ຕ້ອງແຈ້ງໃຫ້ຜູ້ຖືກປະຕິ ບັດຄໍາຕັດສິນຂອງສານຊາບ ແລະ ເຂົ້າຮ່ວມໃນການປະຕິບັດ, ຖ້າຜູ້ກ່ຽວຫາກບໍ່ເຂົ້າຮ່ວມໂດຍບໍ່ມີເຫດຜົນ ອົງການປະຕິບັດຄໍາຕັດສິນຂອງສານ ຕ້ອງມອບເງິນໃຫ້ເຈົ້າໜີ້ຂອງຜູ້ກ່ຽວ.

**6. ມາດຕະການທາງອາຍາ**

ມາດຕະການທາງອາຍາ ແມ່ນມາດຕະການສຸດທ້າຍທີ່ນໍາໃຊ້ຕໍ່ຜູ້ຖືກປະຕິບັດຄໍາຕັດສິນຂອງສານ ແລະ ຈະນໍາໃຊ້ ໃນກໍລະນີທີ່ການນໍາໃຊ້ບັນດາມາດຕະການຕ່າງໆທີ່ໄດ້ກ່າວມາຂ້າງເທິງແຕ່ບໍ່ໄດ້ຮັບຜົນ, ຫົວໜ້າອົງການປະຕິບັດຄໍາຕັດສິນຂອງສານ ສາມາດສະເໜີຕໍ່ອົງການດໍາເນີນຄະດີອາຍາ ໂດຍແມ່ນອົງການໄອຍະການປະຊາຊົນ ບໍ່ຈໍາເປັນຜ່ານເຈົ້າໜ້າທີ່ສືບສວນ - ສອບສວນ ເນື່ອງຈາກວ່າ ໃນການປະຕິບັດຄໍາຕັດສິນຂອງສານ ຫົວໜ້າອົງການປະຕິບັດຄໍາຕັດສິນຂອງສານ ໄດ້ລາຍງານຕໍ່ອົງການໄອຍະການ ຫຼື ມີຜູ້ຕາງໜ້າອົງການໄອຍະການປະຊາຊົນເຂົ້າຮ່ວມເປັນປົກກະຕິ. ດັ່ງນັ້ນ, ເມື່ອມີການບໍ່ປະຕິບັດຄໍາຕັດສິນຂອງສານ ໂດຍຜ່ານການນໍາໃຊ້ມາດຕະການທີ່ກ່ຽວຂ້ອງແລ້ວ ແຕ່ບໍ່ໄດ້ຮັບຜົນ, ຫົວໜ້າອົງການປະຕິບັດຄໍາຕັດສິນຂອງສານ ຕ້ອງລາຍງານຕໍ່ອົງການໄອຍະການປະຊາຊົນເພື່ອດໍາເນີນຄະດີຕໍ່ຜູ້ກ່ຽວໃນຖານບໍ່ປະຕິບັດຄໍາຕົກລົງຂອງສານຕາມປະມວນກົດໝາຍອາຍາຂອງ ສປປ ລາວ, ຊຶ່ງປະມວນກົດໝາຍອາຍາກໍານົດໄວ້ວ່າ "ບຸກຄົນໃດຫາກບໍ່ປະຕິບັດຄໍາສັ່ງ, ຄໍາຊີ້ຂາດ, ຄໍາຕັດສິນ, ຄໍາພິພາກສາ ຫຼື ໝາຍຮຽກຂອງສານ ຈະຖືກລົງໂທດຕັດອິດສະລະພາບແຕ່ສາມເດືອນ ຫາສອງປີ ແລະ ຈະຖືກປັບໃໝແຕ່ 1.000.000 ກີບ ຫາ 5.000.000 ກີບ"[6].

ການນໍາໃຊ້ມາດຕະການທາງອາຍາດັ່ງກ່າວ ແມ່ນມາດຕະການສຸດທ້າຍ ທີ່ຈະນໍາໃຊ້ຕໍ່ຜູ້ຖືກປະຕິບັດຄໍາຕັດສິນຂອງສານ, ເຖິງຢ່າງໃດກໍຕາມ ອົງການດໍາເນີນຄະດີອາຍາ ກໍຕ້ອງປະຕິບັດຕາມພາລະບົດບາດຂອງຕົນ ໂດຍສອດຄ່ອງກັບກົດໝາຍ ແລະ ປະຕິບັດຢ່າງເຂັ້ມງວດ ມາດຕະການທາງອາຍາ ເປັນມາດຕະການທີ່ແຕະຕ້ອງເຖິງສິດເສລີພາບຂອງຜູ້ຖືກປະຕິບັດຄໍາຕັດສິນຂອງສານ ເນື່ອງຈາກວ່າຖ້ານໍາໃຊ້ມາດຕະການດັ່ງກ່າວ ໝາຍເຖິງການວາງໂທດ, ສະນັ້ນ ການນໍາໃຊ້ມາດຕະການທາງອາຍາຕ້ອງມີການພິຈາລະນາຢ່າງຮອບຄອບ ແລະ ມີການກວດກາຄວາມຖືກຕ້ອງທີ່ສຸດ ເພື່ອຮັບປະກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

➢ **ນອກຈາກບັນດາມາດຕະການທີ່ກ່າວມາຂ້າງເທິງນັ້ນແລ້ວ, ໃນກົດໝາຍປະຕິບັດຄໍາຕັດສິນຂອງສານຂອງລາວສະບັບປີ 2021 ຍັງໄດ້ກໍານົດກ່ຽວກັບມາດຕະການຮີບດ່ວນ, ຊຶ່ງ ອົງການປະຕິບັດຄໍາຕັດສິນຂອງສານ ມີສິດຊີ້ຂາດຊັບສິ່ງຂອງ ຂອງຜູ້ຖືກປະຕິບັດຄໍາຕັດສິນຂອງສານ ເນື່ອງຈາກວ່າຊັບດັ່ງກ່າວ ຈະມີການປ່ຽນຮູບ ຫຼື ເສື່ອມເສຍຄຸນນະພາບ ກ່ອນການປະຕິບັດຄໍາຕັດສິນຂອງສານ.**

**References:**


1. ປະມວນກົດໝາຍອາຍາ, ສະບັບເລກທີ 26/ສພຊ ລົງວັນທີ 17 ພຶດສະພາ 2017;
2. ກົດໝາຍວ່າດ້ວຍການປະຕິບັດຄໍາຕັດສິນຂອງສານ, ສະບັບເລກທີ 12/ສພຊ, ລົງວັນທີ 17 ພະຈິກ 2021;
3. ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ (ສະບັບປັບປຸງ) ປີ 2008;
4. ຕໍາລາກໍ່ສ້າງວິຊາຊີບປະຕິບັດຄໍາຕັດສິນຂອງສານ ( ເຫຼັ້ມທີ II: ພາກທັກສະສະເພາະ ) ຂອງສະຖາບັນຍຸຕິທໍາແຫ່ງຊາດ, ປີ 2020.


---

[6] ມາດຕາ 389 ປະມວນກົດໝາຍອາຍາ, ສະບັບເລກທີ 26/ສພຊ ລົງວັນທີ 17 ພຶດສະພາ 2017